Lao - ປ້ອງກັນ ພຣະຄຳພີ - Protection Scriptures

ເຢເຣມີ 1:18 ຈົ່ງຟັງ ເຢເຣມີຢາເອີຍ ຄືທຸກໆຄົນໃນປະເທດນີ້ ທັງກະສັດຂອງຊາວຢູດາ ຂ້າຣາ ຊການ ປະໂຣຫິດ ແລະປະຊາຊົນທັງປວງ

ເອເຊກຽນ 3:18 ຖ້າເຮົາປະກາດວ່າ ຄົນຊົ່ວຜູ້ນຶ່ງຈະຕ້ອງຕາຍ ແຕ່ຖ້າເຈົ້າບໍ່ຕັກເຕືອນໃຫ້ເຂົາປ່ຽນທາງເພື່ອຊ່ອຍຊີວິດເຂົາໄວ້ ຄົນຊົ່ວຜູ້ນັ້ນກໍຈະຕາຍເສັງຍ້ອນບາບຂອງຕົນເອງ ແລ້ວເຮົາຈະຖືວ່າການຕາຍຂອງຜູ້ນັ້ນເປັນຄວາມຜິດຂອງເຈົ້າ

ເຢເຣມີ 6:27 ເຮົາໄດ້ກະທຳໃຫ້ເຈົ້າເປັນຜູ້ໄປທົດລອງເບິ່ງໄພ່ພົນຂອງເຮົາ ແລະສຶກສາເບິ່ງຄວາມປະພຶດທັງຫລາຍຂອງເຂົາ

ລະບຽບພວກເລວີ 26:19 ເຮົາຈະທຳລາຍຄວາມດີ້ດ້ານຈອງຫອງໃນກຳລັງອຳນາດຂອງເຈົ້າ ເຮົາຈະກະທຳໃຫ້ຟ້າສວັນຂອງເຈົ້າເຫມືອນທອງເຫລືອງ

ພຣະບັນຍັດສອງ 23:5 ຢ່າງໃດກໍດີພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານບໍ່ໄດ້ຟັງບາລາອາມ ແຕ່ພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງປ່ຽນຄຳສາບແຊ່ງໃຫ້ເປັນຄຳອວຍພອນທ່ານ ເພາະວ່າພຣະຜູ້ເປັນເຈົ້າພຣະເຈົ້າຂອງທ່ານຊົງຮັກທ່ານ

ໂຣມ 12:21 ຢ່າໃຫ້ຄວາມຊົ່ວໄດ້ຊະນະເຈົ້າ ແຕ່ຈົ່ງຊະນະຄວາມຊົ່ວດ້ວຍຄວາມດີ

ເພງສັນລະເສີນ 143:8,10 ຂໍຊົງໂຜດໃຫ້ຂ້າພຣະອົງໄດ້ຍິນເຖິງຄວາມຮັກຫມັ້ນຄົງຂອງພຣະອົງ ໃນເວລາເຊົ້າ ເພາະຂ້າພຣະອົງວາງใจໃນພຣະອົງ ຂໍຊົງສອນຂ້າພຣະອົງເຖິງທາງທີ່ຄວນໄປ ເພາະຂ້າພຣະອົງຕັ້ງใจແນ່ວແນ່ໃນພຣະອົງ 10 ຂໍຊົງສອນໃຫ້ຂ້າພຣະອົງທຳຕາມພຣະທັຍ ຂອງພຣະອົງ ເພາະພຣະອົງຊົງເປັນພຣະເຈົ້າຂອງຂ້າພຣະອົງ ຂໍພຣະວິນຍານປະເສີດຂອງ ພຣະອົງຊົງນຳຂ້າພຣະອົງໄປຕາມວິຖີທາງອັນລາບລື່ນ

ເພງສັນລະເສີນ 94:12 ຂ້າແດ່ພຣະຜູ້ເປັນເຈົ້າ ຄົນທີ່ພຣະອົງຊົງຕີສອນນັ້ນ ກໍເປັນສຸກ ຄືຄົນທີ່ ພຣະອົງຊົງສອນດ້ວຍພຣະທັມຂອງພຣະອົງ

ສຸພາສິດ 27:12 ຄົນຫຍັ່ງຮູ້ ເຫັນອັນຕະຣາຍ ແລະເຊື່ອງຕົວຂອງເຂົາເສັງ ແຕ່ຄົນໂງ່ເດີນ ເລື້ອຍໄປ ແລະຮັບອັນຕະຣາຍນັ້ນ

ຟີລິປອຍ 2:16 ຄືສະແດງພຣະທັມອັນປະກອບດ້ວຍຊີວິດ ເພື່ອເຮົາຈະມີບ່ອນອວດໄດ້ໃນວັນ ຂອງພຣະຄຣິດວ່າ ເຮົາບໍ່ໄດ້ແລ່ນແລະບໍ່ໄດ້ເຮັດການຫນັກຫນ່ວງເປັນການເສັງປໂຍດ

ເອຊາຢາ 49:4 ຂ້າພະເຈົ້າເວົ້າວ່າ, “ຂ້າພະເຈົ້າໄດ້ເຮັດວຽກ ແຕ່ວຽກນັ້ນບໍ່ມີປໂຍດ ຂ້າພະເຈົ້າ

ໄດ້ເສັງແຮງໄປລ້າໆ ແຕ່ບໍ່ມີຫຍັງສຳເຮັດຜົນ” ຂ້າພະເຈົ້າໄວ້ວາງใจແລະມອບທຸກສິ່ງໄວ້ກັບພຣະຜູ້ເປັນເຈົ້າ ພຣະອົງຊົງຈະມອບຄ່າຕອບແທນວຽກງານໃຫ້ຂ້າພະເຈົ້າ

ເພງສັນລະເສີນ 76:3 ທີ່ນັ້ນ ພຣະອົງຊົງຫັກລູກທະນູເພີງ ໂລ່ ດາບ ແລະຍຸດທະພັນ

ເຮັບເຣີ 13:21 ຈົ່ງຊົງກະທຳໃຫ້ທ່ານທັງຫລາຍເປັນຄົນຄົບຖ້ວນໃນການດີທຸກຢ່າງ ເພື່ອຈະໄດ້ປະຕິບັດຕາມພຣະທັຍພຣະອົງ ແລະຊົງທຳງານພາຍໃນທ່ານທັງຫລາຍຕາມທີ່ຊອບໃນສາຍພຣະເນດຂອງພຣະອົງ ໂດຍທາງພຣະເຢຊູຄຣິດ ສະງ່າຣາສີມີແດ່ພຣະ

1 ໂກຣິນໂທ 16:15 ເຈົ້າທັງຫລາຍຮູ້ຈັກຄອບຄົວຂອງຊະເຕຟານາວ່າ ເຂົາເປັນຄຣິສະຕຽນພວກແຣກໃນແຂວງອະຂາຢາ ແລະພວກເຂົາໄດ້ຖວາຍຕົວໄວ້ໃນການປະຕິບັດໃພ່ພົນຂອງພຣະເຈົ້າ ພີ່ນ້ອງເອີຍ, ເຮົາເຕືອນສະຕິ

ຟີລິປອຍ 1:27 ຂໍແຕ່ພຽງໃຫ້ເຈົ້າທັງຫລາຍດຳເນີນຊີວິດໃຫ້ສົມກັບຂ່າວປະເສີດເຣື່ອງພຣະຄຣິດ ເພື່ອວ່າຖ້າເຮົາມາຫາພວກເຈົ້າຫລືບໍ່ມາກໍ່ຕາມ ເຮົາກໍ່ຈະໄດ້ຍິນຂ່າວຂອງພວກເຈົ້າວ່າ ເຈົ້າທັງຫລາຍຕັ້ງຫມັ້ນຄົງຢູ່ເປັນນ້ຳນຶ່ງໃຈດຽວກັນ ຕໍ່ສູ້ເຫມືອນຢ່າງເປັນຄົນດຽວ ເພື່ອຄວາມເຊື່ອອັນເກີດຈາກຂ່າວປະເສີດນັ້ນ

1 ໂກຣິນໂທ 15:58 ດັ່ງນີ້ແຫລະ, ພີ່ນ້ອງທີ່ຮັກຂອງເຮົາເອີຍ, ເຈົ້າທັງຫລາຍຈົ່ງຕັ້ງຫມັ້ນຢູ່ ຢ່າຫວັ່ນໄຫວ ຈົ່ງປະຕິບັດງານຂອງອົງພຣະຜູ້ເປັນເຈົ້າໃຫ້ບໍຣິບູນທຸກເວລາ ດ້ວຍຮູ້ວ່າໃນອົງພຣະຜູ້ເປັນເຈົ້າ ການຂອງພວກເຈົ້ານັ້ນຈະບໍ່ໄຮ້ປໂຍດ

ໂກໂລຊາຍ 4:12 ເອປາຟາ, ຊຶ່ງເປັນຄົນນຶ່ງໃນພວກເຈົ້າ ແລະເປັນຜູ້ຮັບໃຊ້ຂອງພຣະເຢຊູຄຣິດ ກໍ່ຝາກຄວາມຄິດເຖິງມາຍັງເຈົ້າທັງຫລາຍເຫມືອນກັນ ທ່ານໄດ້ອົດສາສູ້ໃນການອ້ອນວອນສຳລັບເຈົ້າທັງຫລາຍຢູ່ສເມີ ຫວັງຈະໃຫ້ພວກເຈົ້າຕັ້ງຫມັ້ນຢູ່ເປັນຜູ້ໃຫຍ່ຖ້ວນ ແລະຮັບຄວາມແນ່ໃຈອັນແຫນ້ນຫນາໃນທຸກສິ່ງຕາມນ້ຳພຣະທັຍຂອງພຣະເຈົ້າ

2 ກະສັດ 19:34 ແລະເພື່ອເຫັນແກ່ດາວິດຜູ້ຮັບໃຊ້ຂອງເຮົາ ເຮົາຈະປ້ອງກັນແລະປົກປັກຮັກສາໄວ້” ເຮົາພຣະຜູ້ເປັນເຈົ້າຊົງໄດ້ກ່າວໄວ້ດັ່ງນີ້

ເຢເຣມີ 15:20,21 ເຮົາຈະກະທຳໃຫ້ເຈົ້າເປັນກຳແພງປ້ອມທອງສຳຣິດແກ່ຊົນຊາດນີ້ ເຂົາທັງຫລາຍກໍ່ຈະຕໍ່ສູ້ກັບເຈົ້າ ແຕ່ເຂົາຈະບໍ່ຊະນະເຈົ້າ ເພາະເຮົາຢູ່ກັບເຈົ້າ ຈະຊ່ວຍໃຫ້ລອດແລະຊ່ວຍກູ້ເຈົ້າ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ 21 ເຮົາຈະຊ່ວຍກູ້ເຈົ້າຈາກມືຂອງຄົນອະທັມ ແລະໄຖ່ເຈົ້າຈາກກຳມືຂອງຄົນອຳມະຫິດ

ເພງສັນລະເສີນ 55:18 ພຣະອົງຈະຊົງຊ່ວຍກູ້ຈິດວິນຍານຂອງຂ້າພະເຈົ້າໃຫ້ປອດພັຍຈາກສົງ
ຄາມທີ່ຂ້າພະເຈົ້າຕໍ່ສູ້ຢູ່ ເພາະຄົນເປັນຈຳນວນຫລາຍຕັ້ງແຖວສູ້ຂ້າພະເຈົ້າ

ເອເຊກຽນ 30:24 ເຮົາຈະເສີມກຳລັງແຂນຂອງກະສັດບາບີໂລນ ແລະເອົາດາບຂອງເຮົາໃສ່ມື
ໃຫ້ ແຕ່ເຮົາຈະຫັກແຂນຂອງຟາຣາ�โอ ແລະເຂົາຈະຄ່ຳຄວນຕໍ່ຫນ້າທ່ານຢ່າງຄົນຖືກບາດ
ເຈັບເກືອບຈະຕາຍ

ພຣະນິມິດ 3:18 ເຫດນັ້ນເຮົາເຕືອນສະຕິເຈົ້າໃຫ້ຊື້ຄຳທີ່ຫລອມໃຫ້ບໍຣິສຸດແລ້ວຈາກເຮົາ
ເພື່ອເຈົ້າຈະໄດ້ເປັນຄົນຮັ່ງມີ ແລະໃຫ້ເຈົ້າຊື້ເສື້ອຜ້າຂາວນຸ່ງຫົ່ມຕົວ ເພື່ອປົກບັງຄວາມລະ
ອາຍຂອງການເປືອຍກາຍຂອງເຈົ້າບໍ່ໃຫ້ປາກົດ ແລະຊື້ຢາໃສ່ຕາຂອງເຈົ້າເພື່ອເຈົ້າຈະໄດ້
ເຫັນຮຸ່ງ

1 ໂຍຮັນ 3:17 ແຕ່ຖ້າຜູ້ໃດມີຊັບສົມບັດໃນໂລກນີ້ ແລະເຫັນພີ່ນ້ອງຂອງຕົນຂັດສົນ ແລະຍັງ
ບໍ່ຍອມມີໃຈເມດຕາຊ່ວຍເຫລືອຜູ້ນັ້ນ ຄວາມຮັກຕໍ່ພຣະເຈົ້າຈະດຳຣົງຢູ່ໃນຕົນໄດ້ຢ່າງໃດ

ເອຊາຢາ 50:4 ພຣະເຈົ້າໄດ້ປະທານໃຫ້ຂ້າພະເຈົ້າມີລີ້ນຂອງບັນດາຜູ້ທີ່ພຣະອົງຊົງສອນ ເພື່ອ
ຂ້າພະເຈົ້າຈະໄດ້ຮູ້ທີ່ຈະຄ້ຳຊູຜູ້ທີ່ອິດເມື່ອຍໄວ້ດ້ວຍຖ້ອຍຄຳ ທຸກໆເຊົ້າພຣະອົງຊົງປຸກ ຊົງ
ປຸກຫູຂອງຂ້າພະເຈົ້າເພື່ອໃຫ້ຟັງຢ່າງຜູ້ທີ່ພຣະອົງຊົງສອນ

ເພງສັນລະເສີນ 18:39 ເພາະພຣະອົງຊົງເອົາກຳລັງຄາດແອວຂ້າພຣະອົງໄວ້ເພື່ອທຳສົງຄາມ
ພຣະອົງຊົງກະທຳໃຫ້ຂ້າພຣະອົງຜາບແພ້ເຫລົ່າສັດຕຣູ

2 ຊາມູເອນ 22:40 ພຣະອົງຊົງປະທານໃຫ້ຂ້າພຣະອົງມີກຳລັງແຂງແຮງອອກໄປສູ່ສະຫນາມ
ຮົບ ແລະຊົງປະທານໃຫ້ຂ້າພຣະອົງຊະນະສັດຕຣູທັງຫລາຍ

ເພງສັນລະເສີນ 89:43 ພຣະອົງຊົງຫັນຄົມດາບຂອງທ່ານ ແລະພຣະອົງບໍ່ໄດ້ຊົງກະທຳໃຫ້ທ່ານ
ຕັ້ງຫມັ້ນຢູ່ໃນສົງຄາມ

ເອເຊກຽນ 13:6 ເຂົາທັງຫລາຍເຫັນນິມິດບໍ່ຈິງ ແລະທຳນວາຍຕົວະ ເຂົາກ່າວວ່າ "ພຣະຜູ້
ເປັນເຈົ້າກ່າວວ່າ ໃນເມື່ອພຣະຜູ້ເປັນເຈົ້າບໍ່ໄດ້ຊົງໃຊ້ເຂົາໄປ ເຖິງປານນັ້ນເຂົາກໍຍັງຫວັງທີ່
ຈະໃຫ້ສຳເຣັດຕາມຖ້ອຍຄຳຂອງເຂົາ

ລະບຽບພວກເລວີ 26:37 ເຂົາຈະສະດຸດຊົ່ງກັນແລະກັນ ເຫມືອນຄົນຫນີດາບທັງທີ່ບໍ່ມີຄົນ
ຕາມມາ ແລະເຈົ້າຈະບໍ່ມີກຳລັງຕໍ່ຕ້ານສັດຕຣູຂອງເຈົ້າ

1 ໂກຣິນ�โທ 14:8 ຖ້າດ່ຽວແກອອກສຽງບໍ່ຄັກ ໃຜຈະຕຽມຕົວເຂົ້າສູ່ຂ້າເສີກ

ໂຢບ 15:24 ຄວາມທຸກໃຈ ແລະຄວາມແສນລະທົມ ທຳໃຫ້ເຂົາຢ້ານກົວ ມັນຊນະເຂົາເຫມືອນ ຢ່າງພຣະຣາຊາຕຽມພ້ອມແລ້ວສຳລັບການເສີກ

1 ຂ່າວຄາວ 12:8 ມີທະຫານເອກທະຫານແລະຜູ້ຊຳນານເສີກຈາກຄົນກາດຫນີເຂົ້າໄປຫາດາ ວິດໃນທີ່ກຳບັງເຂັ້ມແຂງໃນຖິ່ນກັນດານ ເຂົາຊຳນານໂລ່ແລະຫອກ ຜູ້ຊຶ່ງຫນ້າຂອງເຂົາ ເຫມືອນສິງ ແລະຜູ້ຊຶ່ງໄວເຫມືອນມັ່ງເທິງພູເຂົາ

1 ຂ່າວຄາວ 12:33,38 ຈາກຄົນເຊບູລູນ ມີຫ້າຫມື່ນຄົນທີ່ຜຶກແລ້ວຕຽມພ້ອມເຂົ້າສູ້ຮົບ ພ້ອມດ້ວຍອາວຸດທຸກຢ່າງເພື່ອທຳສົງຄາມເພື່ອຊ່ວຍເຫລືອ ບໍ່ແມ່ນດ້ວຍສອງຈິດສອງໃຈ 38 ທະຫານທັງສິ້ນເຫລົ່ານີ້ ພ້ອມທີ່ຈະທຳເສີກ ໄດ້ມາຍັງເຮໂບຣນ ດ້ວຍເຈຕນາເຕັມບ່ຽມ ທີ່ຈະເຊີນດາວິດເປັນກະສັດເຫນືອອິສຣາເອນທີ່ເຫລືອຢູ່ ກໍເປັນໃຈດຽວກັນທີ່ຈະເຊີນດາ ວິດເປັນກະສັດ

ລູກາ 10:19 ແລະເບິ່ງແມ່, ເຮົາໄດ້ໃຫ້ພວກທ່ານມີອຳນາດຢຽບງູແລະແມງງອດ ແລະໃຫ້ມີອຳ ນາດເຫນືອກຳລັງຂອງສັດຕຣູ ແລະບໍ່ມີສິ່ງໃດເຮັດອັນຕະຣາຍແກ່ພວກທ່ານໄດ້

2 ໂກຣິນໂທ 7:10 ດ້ວຍວ່າຄວາມທຸກໃຈຕາມຢ່າງຊອບພຣະທັຍພຣະເຈົ້ານັ້ນ ຍ່ອມເຮັດໃຫ້ ກັບໃຈສັງໃຫມ່ ຊຶ່ງນຳໄປສູ່ຄວາມພົ້ນໂດຍບໍ່ຄວນກົນແຫນງ ແຕ່ຄວາມທຸກໃຈຕາມຢ່າງ ໂລກນັ້ນ ຍ່ອມນຳໄປເຖິງຄວາມຕາຍ

2 ຕິໂມທຽວ 2:25,26 ຊີ້ແຈງໃຫ້ຄົນທີ່ຂັດຂວາງຕໍ່ສູ້ນັ້ນດ້ວຍໃຈອ່ອນສຸພາບ ว่าพระเจ้า ອາດຊົງໂຜດໃຫ້ເຂົາຖິ້ມໃຈເກົ່າເອົາໃຈໃຫມ່ ແລະມາເຖິງການສັງເກດຮູ້ຄວາມຈິງ 26 ແລະ ໃຫ້ເຂົາຮູ້ສຶກຕື່ນຕົວຈົ່ງຫລຸດພົ້ນຈາກບ້ວງແຮ້ວຂອງມານ ຜູ້ຊຶ່ງຈັບເຂົາໄວ້ໃຫ້ເຮັດຕາມ ຄວາມປະສົງຂອງມັນ

ເນເຫມີ 4:15 ເມື່ອພວກສັດຕຣູໄດ້ຮູ້ຂ່າວວ່າ ພວກຂ້າພະເຈົ້າຮູ້ຈັກແຜນການຂອງເຂົາ ພວກເຂົາຈົ່ງຮູ້ວ່າພຣະເຈົ້າຊົງທຳໃຫ້ແຜນການຂອງເຂົາຜ່ານແພ້ໄປ ສ່ວນພວກຂ້າພະ ເຈົ້າທຸກຄົນກໍກັບຄືນເມືອເຮັດວຽກຕາມກຳແພງເມືອງ

ເພງສັນລະເສີນ 73:24 ພຣະອົງຊົງນຳພາຂ້າພຣະອົງດ້ວຍການຕັກເຕືອນຂອງພຣະອົງ ແລະໃນ ທີ່ສຸດພຣະອົງຈະຕ້ອນຮັບຂ້າພຣະອົງດ້ວຍກຽດຕິຍົດ